# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 19 ມີນາ 2023 (03-19-2023)

---

## ພຣະເຢຊູປະທານພຣະຄຸນແລະໃຫ້ອະພັຍຂ້າພະເຈົ້າ

*ແມ່ນຫຍັງຄືບາງເຣື່ອງຂອງການໃຫ້ອະພັຍທີ່ທ່ານປະທັບໃຈ?*

**ຈຸດສຳຄັນໃນບົດຮຽນ:** ພຣະເຢຊູໄດ້ຮັບແບບເອົາຄວາມຮູ້ສຶກຜິດແລະໄດ້ປົດປ່ອຍຂ້າພະເຈົ້າໃຫ້ມີອິສຣະແລ້ວ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເມື່ອຫຼາຍປີກ່ອນ, ຂ້າພະເຈົ້າໄດ້ເທສນາເຣື່ອງການໃຫ້ອະພັຍ. ຂ້າພະເຈົ້າໄດ້ກ່າວເຖິງວິທີທີ່ພຣະເຈົ້າໄດ້ໃຫ້ອະພັຍພວກເຮົາແລະ, ດັ່ງນັ້ນ, ພວກເຮົາຈຳເປັນຕ້ອງໃຫ້ອະພັຍຄົນອື່ນ. ມື້ຕໍ່ມາ, ມີຊາຍຜູ້ນຶ່ງໄດ້ມາລໍຖ້າຢູ່ໃນຫ້ອງການຂອງຂ້າພະເຈົ້າເພື່ອເວົ້າກ່ຽວກັບເຣື່ອງການເທດສນາຂອງຂ້າພະເຈົ້າ. ການຮູ້ວ່າໃຜຜູ້ນຶ່ງຕ້ອງການ "ສົນທະນາເຣື່ອງການເທດສນາ" ມັນເພີ້ມໃຫ້ສິດຍາພິບານທຸກໆຄົນຮູ້ວ່າມີສິ່ງບໍ່ປົກກະຕິ. ມັນຈະເປັນການຊົມເຊີຍຫຼືການວິພາກວິຈານຢ່າງໜັກບໍ? ລາວຈະຊີ້ໃຫ້ເຫັນຕົວຢ່າງທີ່ບໍ່ດີທີ່ຂ້າພະເຈົ້າໄດ້ໃຊ້ນັ້ນບໍ? ລາວຈະວິພາກວິຈານການຕີຄວາມໝາຍຂອງຂໍ້ພຣະຄັມພີນັ້ນບໍ?

ສິ່ງທີ່ຂ້າພະເຈົ້າໄດ້ພົບກໍຄືຜູ້ຊາຍທີ່ກຳລັງໄຫ້ຢູ່. ລາວໄດ້ບອກຂ້າພະເຈົ້າວ່າລາວໄດ້ກະທຳສິ່ງຊົ່ວຮ້າຍບາງຢ່າງໃນຊີວິດຂອງລາວ, ແລະລາວບໍ່ແນ່ໃຈວ່າຈະໄດ້ຮັບການໃຫ້ອະພັຍຫຼືບໍ່. ມີຫຼາຍໆຄົນດຳເນີນຊີວິດຢູ່ພາຍໃຕ້ພາລະອັນໜັກໜ່ວງນີ້. ພວກເຂົາຮູ້ເຖິງຄວາມເຈັບປວດທີ່ພວກເຂົາໄດ້ກໍ່ຂຶ້ນ, ແລະພວກເຂົາດຳເນີນຊີວິດທຸກວັນດ້ວຍຄວາມອັບອາຍແລະຄວາມຮູ້ສຶກຜິດ. ຂ່າວດີທີ່ຂ້າພະເຈົ້າໄດ້ແບ່ງປັນກັບຊາຍຄົນນີ້ເປັນຂ່າວດີອັນດຽວກັນກັບທີ່ມີໄວ້ສຳລັບທຸກໆຄົນ. ພຣະເຢຊູໄດ້ສະເດັດມາເພື່ອໃຫ້ອະພັຍແລະໃຫ້ພຣະຄຸນຕໍ່ທຸກຄົນທີ່ເຊື່ອໄວ້ວາງໃຈໃນພຣະອົງ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3, )

### ສຶກສາພຣະຄັມພີ

### 1. ໂຢຮັນ 8:2-6ກ

***2.*** *ເມື່ອຮຸ່ງເຊົ້າພຣະອົງໄດ້ສະເດັດເຂົ້າໄປໃນບໍລິເວນພຣະວິຫານອີກພົນລະເມືອງທັງໝົດກໍພາກັນມາຫາພຣະອົງ ພຣະອົງກໍປະທັບນັ່ງຕັ້ງຕົ້ນສັ່ງສອນເຂົາ. 3. ພວກນັກທັມແລະພວກຟາຣີຊາຍໄດ້ພາຜູ້ຍິງຄົນນຶ່ງມາຍິງຄົນນີ້ເຂົາໄດ້ຈັບໃນຖານຫລິ້ນຊູ້ແລະເຂົາໄດ້ໃຫ້ຍິງນັ້ນຢືນຢູ່ຖ້າມກາງຝູງຊົນ. 4. ເຂົາທູນພຣະອົງວ່າ, "ອາຈານເອີຍ, ຍິງຄົນນີ້ເຂົາຈັບໄດ້ ເມື່ອກຳລັງຫລິ້ນຊູ້ຢູ່. 5. ໂມເຊໄດ້ສັ່ງໄວ້ໃນພຣະບັນຍັດວ່າໃຫ້ເອົາຫີນຄວ່າງໃສ່ຄົນຢ່າງນີ້ໃຫ້ຕາຍສ່ວນທ່ານເດ, ຈະວ່າຢ່າງໃດ." 6. ເຂົາເວົ້າຢ່າງນີ້ເພື່ອທົດລອງຫວັງຈະຫາເຫດຟ້ອງພຣະອົງໄດ້.*

ມີສອງສາມຄັ້ງທີ່ໄດ້ບັນທຶກໃນພຣະຄັມພີຊຶ່ງເປັນເຣື່ອງທີ່ເຮັດໃຫ້ເປັນການປຸກ-ຄວາມຄິດກວ່າເຣື່ອງຜູ້ຍິງຖືກຈັບໃນຖານຫຼິ້ນຊູ້. ຂ້າພະເຈົ້າສົມມຸດເອົາວ່າອັນນີ້ແມ່ນຍ້ອນວ່າມັນງ່າຍທີ່ຈະເຫັນຕົວພວກເຮົາເອງໃນພຣະຄຳວັກນີ້. ບາງຄັ້ງພວກເຮົາສາມາດເຫັນຕົວພວກເຮົາເອງເປັນເໝືອນຜູ້ຍິງທີ່ເຮັດບາບ. ພວກເຮົາໄດ້ກະທຳຜິດອັນໃຫ່ຍ, ທຸກຄົນຮູ້ຈັກມັນ, ແລະພວກເຮົາກໍຈະຊອກຫາພຣະຄຸນທີ່ພວກເຮົາສາມາດຫາໄດ້. ໃນເວລາອື່ນໆພວກເຮົາສາມາດຮູ້ຕົວເອງວ່າເປັນເໝືອນພວກຜູ້ນຳສາສນາທີ່ຊອບທັມດ້ວຍ-ຕົວເອງຜູ້ຊຶ່ງຕ້ອງການທີ່ຈະແກ່ວງກ້ອນຫີນໃສ່ຄົນອື່ນ. ພວກເຮົາເບິ່ງເຫັນຄວາມບາບຂອງຄົນອື່ນແລະ, ໃນຄວາມກະຕືລືລົ້ນຈົນເກີນໄປຂອງພວກເຮົາສຳລັບຄວາມຈິງແລະຄວາມຊອບທັມ, ພວກເຮົາລືມໄປວ່າພວກເຮົາກໍເປັນຜູ້ຕ້ອງການພຣະຄຸນ. ພວກເຮົາມີຄວາມສົນໃຈໃນການແກ້ແຄ້ນຫຼືຕັດສິນຄົນອື່ນຫຼາຍກວ່າ.

ພວກຜູ້ນຳສາສນາໄດ້ພາຜູ້ຍິງຄົນນຶ່ງທີ່ຖືກຈັບໃນຖານຫຼິ້ນຊູ້ມາຫາພຣະເຢຊູ. ຢ່າໃຫ້ເຣື່ອງນີ້ຜ່ານກາຍໄປຢ່າງວ່ອງໄວເກີນໄປ. ພວກເຂົາບໍ່ໄດ້ພານາງມາຫາພຣະເຢຊູເພື່ອໃຫ້ຕັດສິນວ່ານາງຖືກຫຼືນາງຜິດ. ນາງມີຄວາມຜິດ. ນາງໄດ້ "ທຳຄວາມຜິດ" ແລະນາງກຳລັງຈະຕ້ອງ "ຖືກໂທດ" ສິ່ງນຶ່ງທີ່ໜ້າສົນໃຈກ່ຽວກັບສະຖານະການນີ້ແມ່ນຜູ້ຊາຍທີ່ເຮັດຜິດນັ້ນແມ່ນບໍ່ພົບເຫັນລາວເລີຍ. ກົດບັນຍັດຂອງໂມເຊ (ພຣະບັນຍັດສອງ 22:22)ໄດ້ບອກວ່າໃຫ້ຜູ້ທີ່ມີຄວາມຜິດທັງສອງຕ້ອງຖືກຂ້າ, ແຕ່ໃນຕົວຢ່າງນີ້, ພວກເຂົາພຽງແຕ່ນຳເອົາແມ່ຍິງມາ, ອັນນີ້ເປັນຕົວຊີ້ບອກໃຫ້ພວກເຮົາເຫັນວ່າອັນດັບນຶ່ງແມ່ນພວກເຂົາສົນໃຈໃນການທົດສອບຫຼືກ່າວຫາພຣະເຢຊູວ່າບໍ່ຮັກສາພຣະບັນຍັດ. ພວກເຂົາໄດ້ສະແດງອອກໃຫ້ເຫັນຢ່າງຊັດເຈນກັບການກຳຈັດພຣະເມຊີອາຫຼາຍກ່ວາການກຳຈັດຄວາມບາບ.

ການທົດສອບໄດ້ຕັ້ງເປົ້າແບບນີ້. ຖ້າວ່າພຣະເຢຊູອະນຸຍາດໃຫ້ພວກເຂົາຄ່ວາງກ້ອນຫີນໃສ່ຜູ້ຍິງທີ່ມີຄວາມຜິດພຣະອົງຈະຖືກມອງເບິ່ງວ່າເປັນຄົນໂຫດຮ້າຍແລະບໍ່ມີຄວາມເມດຕາ. ອັນນີ້ຈະເຮັດໃຫ້ມີຜູ້ຄົນຕໍ່ຕ້ານພຣະເຢຊູແນ່ນອນ. ຖ້າພຣະເຢຊູບໍ່ສົນໃຈໃນຄວາມຜິດມະຫັນຂອງຜູ້ຍິງນີ້ພວກຜູ້ນຳຈະຕ້ອງເວົ້າວ່າພຣະເຢຊູບໍ່ມີຄວາມສົນໃຈຕໍ່ກົດບັນຍັດໃນພຣະຄັມພີ. ມັນເບິ່ງຄືວ່າເປັນກົນອຸບາຍດັກຈັບທີ່ສົມບູນແບບ.

ການໂຕ້ຕອບທີ່ງ່າຍທີ່ສຸດແມ່ນພຣະເຢຊູປະຕິເສດທີ່ຈະມີສ່ວນຮ່ວມ. ພຣະອົງພຽງແຕ່ຢືນຢັນຄວາມຈິງໃນພຣະຄັມພີແລະກໍປ່ອຍໃຫ້ມັນຜ່ານໄປ, ປ່ອຍໃຫ້ຍິງຜູ້ນີ້ປະເຊີນກັບຜົນສະທ້ອນຂອງຄວາມບາບຂອງນາງ. ຢ່າງໃດກໍຕາມ, ພຣະເຢຊູ, ເຕັມໄປດ້ວຍຄວາມເມດຕາແລະພຣະຄຸນ, ມີຄວາມຮັກຕໍ່ຍິງນີ້ແລະຮູ້ວ່າສິ່ງນັ້ນເປັນຄວາມຜິດຈິງໆ. ພຣະເຢຊູຮູ້ວ່ານາງມີຄວາມຜິດ. ແຕ່ພຣະອົງບໍ່ໄດ້ປະຕິເສດທີ່ຈະໜີໄປຈາກນາງໃນເວລາທີ່ຮ້າຍແຮງທີ່ສຸດເຊັ່ນນີ້. ພວກເຮົາກໍຄືກັນກັບຜູ້ຍິງຄົນນີ້; ພວກເຮົາທຸກຄົນມີຄວາມຜິດໃນການຝ່າຝືນຂໍ້ຄຳສັ່ງຂອງພຣະເຈົ້າ. ບໍ່ມີໃຜໃນພວກເຮົາທີ່ເປັນຄົນຊອບທັມ (ໂຣມ 3:10) ພວກເຮົາເປັນຄົນບາບທີ່ສຸດ, ແຕ່ພຣະເຢຊູ, ເຫັນພວກເຮົາຢູ່ໃນທີ່ຮ້າຍແຮງທີ່ສຸດ, ເລືອກທີ່ຈະເສັຽສຣະຊີວິດເພື່ອພວກເຮົາ, ໃຫ້ຄວາມຊອບທັມສຳລັບຄົນທີ່ບໍ່ຊອບທັມ.

## 2 ໂຢຮັນ 8:6ຂ-9

*6ຂ. ແຕ່ພຣະເຢຊູຊົງນ້ອມພຣະກາຍລົງໃຊ້ນິ້ວພຣະຫັດຂຽນທີ່ດິນ. 7. ເມື່ອເຂົາຍັງຖາມຕໍ່ໄປຢູ່ ພຣະອົງຊົງຍືນຂຶ້ນກ່າວແກ່ເຂົາວ່າ, "ຜູ້ໃດໃນພວກເຈົ້າທີ່ບໍ່ມີຜິດບາບກໍໃຫ້ຜູ້ນັ້ນເອົາຫີນຄວ່າງໃສ່ຍິງນີ້ກ່ອນໝູ່." 8. ແລ້ວພຣະອົງກໍຊົງນ້ອມພຣະກາຍລົງຂຽນທີ່ດິນອີກ. 9. ແຕ່ເມື່ອເຂົາໄດ້ຍິນດັ່ງນັ້ນກໍອອກໄປເທື່ອລະຄົນຈົນໝົດ ເລີ້ມຕັ້ງແຕ່ຄົນແກ່ໄປຍັງເຫລືອຢູ່ແຕ່ພຣະເຢຊູກັບຍິງຄົນນັ້ນທີ່ຢືນຢູ່ຖ້າມກາງນັ້ນ.*

ພວກເຮົາປາຖນາຢາກຮູ້ວ່າພຣະເຢຊູຂຽນຫັຽງໃສ່ເທິງພື້ນດິນ, ແລະຫຼາຍໆຄົນໄດ້ຄາດເດົາ. ຂ້າພະເຈົ້າໄດ້ຍິນເລື້ອຍໆວ່າພຣະເຢຊູໄດ້ຂຽນຄວາມບາບຂອງທຸກໆຄົນທີ່ຢືນຢູ່ອ້ອມຮອບພຣະອົງ. ຖ້າເປັນແບບນີ້, ມັນຈະເປັນການງ່າຍທີ່ຈະເຫັນວ່າເປັນຫັຽງພວກເຂົາເຫຼົ່ານັ້ນຈຶ່ງວາງຫີນຂອງພວກເຂົາລົງແລະຍ່າງໜີ. ພວກເຮົາບໍ່ຮູ້ວ່າພຣະເຢຊູຂຽນຫັຽງ, ແຕ່ຂໍ້ຄວາມເບິ່ງຄືວ່າບໍ່ມີພະລັງໃນສິ່ງທີ່ພຣະອົງຂຽນ ແຕ່ມີພະລັງໃນສິ່ງທີ່ພຣະອົງເວົ້າ.

ພວກຜູ້ນຳທາງສາສນາຍັງດື້ດຶງ. ພວກເຂົາບໍ່ໄດ້ຖາມພຽງແຕ່ຄັ້ງດຽວ, ແຕ່ພວກເຂົາສືບຕໍ່ກົດດັນ. ເມືອພຣະເຢຊູຕອບພວກເຂົາຊຶ່ງບໍ່ແມ່ນຄຳຕອບທີ່ພວກເຂົາຄາດຫັວງ. ພວກເຂົາຄາດຫັວງວ່າ "ຈັບໄດ້ແລ້ວ" ແຕ່ພວກເຂົາເອງເປັນຜູ້ຖືກ "ຈັບ."

ເມື່ອຫຼາຍປີກ່ອນ, ຂ້າພະເຈົ້າໄດ້ຊຸກຍູ້ໃຫ້ມີການປ່ຽນແປງບາງຢ່າງໃນຄຣິສຕະຈັກຂອງພວກເຮົາຂ້າພະເຈົ້າຮູ້ສຶກວ່າຈະເປັນປໂຍດຕໍ່ອານາຄົດຂອງພວກເຮົາ. ຂ້າພະເຈົ້າໄດ້ຕັ້ງໃຈສອນຢ່າງເອົາຈິງເອົາຈັງຜ່ານທາງພຣະຄັມພີກ່ຽວກັບບັນຫາເຫຼົ່ານີ້ແລະຮູ້ສຶກວ່າການປ່ຽນແປງເຫຼົ່ານີ້ຈະສອດຄ່ອງກັບພວກເຮົາກັບພາລະກິດໃນພຣະຄັມພີແລະໂຄງສ້າງຂອງສິ່ງທີ່ເອີ້ນວ່າຢູ່ໃນພຣະຄັມພີ. ຫຼັງຈາກໄດ້ໂອ້ລົມຜູ້ນຳຂອງພວກເຮົາແລະໄດ້ວາງແຜນການຮ່ວມກັນແລ້ວ, ພວກເຮົາໄດ້ເລີ້ມນຳສເນີມັນຕໍ່ສະມາຊິກຄຣິສຕະຈັກໃນຫ້ອງປະຊຸມທີ່ພວກເຮົາເອີ້ນວ່າ "ຊ່ວງການຖາມແລະການຟັງ." ພວກເຮົາໄດ້ດຳເນີນການປະຊຸມເປັນກຸ່ມໆທີ່ສາມາດໃຫ້ຫຼາຍຄົນໄດ້ຍິນຂ້າພະເຈົ້າ

ເວົ້າແລະອະທິບາຍກ່ຽວກັບການປ່ຽນແປງໃນການຕັ້ງຄຳຖາມຫຼືຂໍຄວາມຄິດຄວາມເຫັນໄດ້.

ໃນອີກຕອນນຶ່ງຂອງຊ່ວງນີ້ມີຊາຍຄົນນຶ່ງທີ່ບໍ່ແມ່ນແຟນປານໃດ, ລາວບໍ່ໄດ້ກຽດຊັງແຜນການ-ທີ່ພວກເຮົາກຳລັງນຳສເນີ. ເມື່ອເຖິງຜຽນທີ່ລາວໄດ້ອອກມາກ່າວ, ລາວໄດ້ເຮັດຂໍ້ຜິດພາດໃນການໃຊ້ປວັດຂອງໂບດເອົາມາເປັນເຫດຜົນສຳລັບບໍ່ຢາກເຮັດບາງສິ່ງທີ່ພຣະຄັມພີໄດ້ກ່າວໄວ້ຢ່າງແຈ່ມແຈ້ງ. ເມື່ອຂ້າພະເຈົ້າໄດ້ຕອບລາວດ້ວຍຄວາມອ່ອນສຸພາບວ່າພຣະຄັມພີມີຄວາມສຳຄັນກ່ວາສິ່ງທີ່ຄຣິສຈັກໄດ້ເຮັດໃນອາດີດຜ່ານມາ, ລາວໂຕ້ຕອບວ່າ "ຂ້ອຍບໍ່ສົນໃຈສິ່ງທີ່ພຣະຄັມພີເວົ້າ; ພວກເຮົາບໍ່ເຄີຍເຮັດແບບນີ້." ໃນເວລານັ້ນທຸກຄົນໃນຫ້ອງປະຊຸມໄດ້ຮັບເອົາແຜນການແລະພວກເຮົາບໍ່ເຄີຍຫັນກັບໄປເບິ່ງຄືນອີກ. ຄຳເວົ້າທີ່ບໍ່ດີແລະຄຳຄິດເຫັນທີ່ໃຊ້ບໍ່ໄດ້ໃນເວລານັ້ນ, ຄຣິສຕະຈັກໄດ້ເບິ່ງເລິກເຂົ້າໄປໃນພຣະຄັມພີແລະຕັດສິນໃຈທີ່ຈະກ້າວໄປຂ້າງໜ້າດ້ວຍແຜນການ. ສິ່ງທີ່ຊາຍຄົນນີ້ໄດ້ຄິດວ່າອາດຈະໄດ້ຊນະໃນມຸມມອງຂອງລາວຄວາມເປັນຈິງມັນໄດ້ນຳຜູ້ຄົນອອກຈາກທັດສະນະຂອງລາວແລະຫັນໄປຫາຄວາມຈິງ. ໃນວິທີດຽວກັນນີ້, ແຜນການຂອງພວກຜູ້ນຳສາສນາໄດ້ຍ້ອນກັບຖືກພວກເຂົາເອງ.

ກຸ່ມຄົນທຳອິດທີ່ຮັບຮູ້ຜົນກະທົບຈາກຄຳເວົ້າຂອງພຣະເຢຊູແມ່ນພວກເຖົ້າແກ່. ພວກເຮົາບໍ່ໄດ້ຖືກບອກໃຫ້ຮູ້ວ່າດ້ວຍເຫດໃດ, ແຕ່ວ່າບາງທີພວກເຂົາທີ່ເປັນຄົນອອກໄປກ່ອນນັ້ນອາດເປັນຍ້ອນປະສົບການຊີວິດຫຼືສຳນຶກໄດ້ເຖິງຄວາມບາບທີ່ຕິດແໜ້ນໃນຊີວິດຂອງພວກເຂົາເອງ. ບໍ່ວ່າຈະເປັນເຫດຜົນອັນໃດກໍຕາມ, ພວກເຂົາໄດ້ວາງກ້ອນຫີນລົງແລະຍ່າງອອກໄປໃນຂນະທີ່ພຣະເຢຊູກົ້ມລົງເພື່ອຂຽນໃສ່ຝຸ່ນດິນອີກ, ຄວາມເປັນຈິງກໍຄືວ່າພວກເຮົາທຸກຄົນເປັນຄົນບາບແລະພວກເຮົາມີສ່ວນຮັບຜົນຂອງຄວາມບາບຄື: ຄວາມຕາຍ.

*ເມື່ອໃດທີ່ທ່ານໄດ້ຖືກທົດລອງຫຼາຍທີ່ສຸດໃຫ້ "ຄ່ວາງກ້ອນຫີນ"?*

### 3. ໂຢຮັນ 8:10-11

*10. ເມື່ອພຣະເຢຊູຊົງເງີຍຂຶ້ນກໍຊົງຖາມຍິງນັ້ນວ່າ, "ນາງເອີຍ, ພວກເຂົາໄປໃສໝົດບໍ່ມີໃຜລົງໂທດເຈົ້າຫລື." 11. ນາງທູນຕອບວ່າ, "ບໍ່ມີໃຜ, ນາຍເອີຍ" ພຣະເຢຊູຊົງກ່າວຕໍ່ນາງວ່າ, "ເຮົາກໍບໍ່ລົງໂທດເຈົ້າເໝືອນກັນຈົ່ງໄປເສັຽຕໍ່ໄປຢ່າເຮັດຜິດອີກ."*

ຄຳຖາມທີ່ຖືກຕ້ອງສາມາດມີພະລັງ. ພວກເຮົາສາມາດມີສ່ວນຮ່ວມ, ມັນສາມາດດຶງດູດພວກເຮົາເຂົ້າໄປ, ແລະມີອຳນາດຊັກຈູງໃຫ້ພວກເຮົາສະທ້ອນແລະຕອບສນອງ. ໃນພຣະຄັມພີເຕັມໄປດ້ວຍຄຳຖາມທີ່ສຳຄັນກ່ວາ. "ແລ້ວຝ່າຍພວກທ່ານເດ, ວ່າເຮົາເປັນໃຜ." (ມັດທາຍ 16:15). "ທ່ານເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດຕໍ່ໄປຈຶ່ງຈະພົ້ນໄດ້." (ກິຈການ 16:30). ຕໍ່ຜູ້ຍິງຄົນນີ້ທີ່ຖືກນຳມາຢູ່ຕໍ່ໜ້າພຣະອົງ, ພຣະເຢຊູໄດ້ຖາມສອງຄຳຖາມທີ່ມີຄຳຕອບທີ່ສາມາດປ່ຽນແປງຊີວິດ. ພຣະເຢຊູຖາມນາງວ່າ, "ນາງເອີຍ, ພວກເຂົາໄປໃສໝົດບໍ່ມີໃຜລົງໂທດເຈົ້າຫລື?" ຜູ້ຍິງຄົນນີ້ໄດ້ປະເຊີນກັບຄວາມຕາຍຢູ່ໃນກຳມືຂອງພວກຟາຣີຊາຍ, ແຕ່ຫຼັງຈາກນັ້ນພຣະເມຊີອາໄດ້ຊົງກ່າວ. ພຣະເຢຊູບໍ່ໄດ້ເວົ້າຫຍັງຫຼາຍ, ແຕ່ພຣະຄຳຂອງພຣະອົງສັກສິດແລະມີອຳນາດ. ຄຳຖາມຂອງພຣະເຢຊູໄດ້ຊີ້ເຖິງຄວາມຈິງອັນຍິ່ງໃຫ່ຽສຳລັບຜູ້ຍິງຄົນນີ້: ພວກຜູ້ກ່າວຫາຂອງນາງໄດ້ຫາຍໄປ!

ພຣະເມຊີອາຄົນດຽວກັນນີ້ທີ່ປະຕິເສດຈະກ່າວໂທດຍິງຜູ້ທີ່ຖືກຈັບມາໃນການກະທຳບາບຂອງການຫຼິ້ນຊູ້ແລະແມ່ນພຣະເມຊີອາອົງດຽວກັນນີ້ທີ່ໄດ້ມາເພື່ອຊ່ວຍທ່ານແລະຂ້າພະເຈົ້າໃຫ້ພົ້ນຈາກບາບກັມ. ພວກເຮົາມີຄວາມຜິດບາບຄືກັນ. ຄືກັນກັບຍິງຄົນນີ້, ພວກເຮົາສົມຄວນທີ່ຈະຕາຍໃນຄວາມບາບຂອງພວກເຮົາ, ແຕ່ພວກເຮົາໄດ້ຮັບຊີວິດໃໝ່ໂດຍທາງຄວາມເຊື່ອໃນພຣະຄຣິດແທນ, ພຣະເຢຊູໄດ້ສເນີໃຫ້ພວກເຮົາຕ້ອນຮັບເອົາຄວາມຈິງທີ່ເຕັມໄປດ້ວຍພຣະຄຸນຢ່າງດຽວກັນກັບທີ່ພຣະອົງໄດ້ໃຫ້ກັບແມ່ຍິງຄົນນີ້: "ເຮົາກໍບໍ່ລົງໂທດເຈົ້າເໝືອນກັນ."

ສັງເກດຖ້ອຍຄຳສຸດທ້າຍຂອງພຣະເຢຊູຕໍ່ຜູ້ຍິງຄົນນີ້ໃນຂນະທີ່ນາງຊຸ່ມຊື່ນໃນພຣະຄຸນຂອງພຣະອົງ. "ຈົ່ງໄປເສັຽ" ຕໍ່ໄປຢ່າເຮັດຜິດອີກ." ນີ້ຄືເນື້ອໃນໝາກຫົວໃຈຂອງການກັບໃຈໃໝ່. ມັນມີຄວາມໝາຍວ່າພວກເຮົາໄດ້ຮັບຂອງປະທານ, ທີ່ຊ່ວຍໃຫ້ພວກເຮົາຫັນໄປຫາພຣະຜູ້ຊ່ວຍແລະປົບໜີຈາກການເຮັດບາບ. ການທີ່ພວກເຮົາປົບໜີຈາກບາບຫຼືເດີນອອກຈາກມັນນັ້ນມີຄວາມໝາຍທີ່ແຕກຕ່າງຈາກການເຂົ້າມາ. ພວກເຮົາຫຽບເຂົ້າມາໃກ້ພຣະອົງແລະເດີນອອກຫ່າງຈາກໂລກ. ການກັບໃຈໃໝ່ເກີດຂຶ້ນພ້ອມກັນກັບພຣະຄຸນ.

ພວກເຮົາບໍ່ໄດ້ກັບໃຈໃໝ່ເພື່ອຈະຮັບພຣະຄຸນ. ຂໍໃຫ້ສັງເກດເບິ່ງສິ່ງທີ່ພຣະເຢຊູບອກຍິງຄົນນັ້ນວ່ານາງບໍ່ຖືກໂທດແລ້ວກ່ອນທີ່ພຣະອົງຈະບອກໃຫ້ນາງເຊົາເຮັດບາບ. ພວກເຮົາກັບໃຈໃໝ່ເມື່ອພວກເຮົາເຫັນຂອງປະທານອັນປະເສີດຂອງພຣະຄຣິດທີ່ໄດ້ນຳມາໃຊ້ໃນຊີວິດຂອງພວກເຮົາ. ໂດຍຜ່ານພຣະຄຸນພວກເຮົາໄດ້ຖືກປົດປ່ອຍໃຫ້ເປັນອິສຣະຈາກກົດຂອງຄວາມບາບໃນຊີວິດຂອງພວກເຮົາ. "ດັ່ງນັ້ນ, ບັດນີ້ການລົງໂທດຈຶ່ງບໍ່ມີແກ່ຄົນທັງຫລາຍທີ່ຢູ່ໃນພຣະເຢຊູຄຣິດ, ເພາະວ່າກົດຂອງພຣະວິນຍານອັນເຮັດໃຫ້ມີຊີວິດໃນພຣະເຢຊູຄຣິດນັ້ນໄດ້ເຮັດໃຫ້ເຮົາພົ້ນຈາກກົດຂອງຄວາມຜິດບາບແລະຄວາມຕາຍ." (ໂຣມ 8:1-2). ທ່ານສາມາດຢືນຢູ່ຢ່າງກ້າຫານໃນພຣະຄຸນຂອງພຣະເຢຊູ, ບໍ່ຖືກກ່າວໂທດອີກຕໍ່ໄປ, ຫຼືທ່ານຍັງມີການລົ້ມລຸກຄຸກຄານກັບຜູ້ທີ່ກ່າວໂທດທີ່ກຳລັງພະຍາຍາມໃຫ້ຢູ່ໃຕ້ກົດຂອງຄວາມຜິດບາບຢູ່? ຈົ່ງຮັບເອົາເສຣີພາບທີ່ອົງພຣະເຢຊູຄຣິດປະທານໃຫ້.

## ນຳໃຊ້ໃນຊີວິດ

ພຣະເຢຊູໄດ້ຮັບແບບເອົາຄວາມຮູ້ສຶກຜິດແລະໄດ້ປົດປ່ອຍຂ້າພະເຈົ້າໃຫ້ມີອິສຣະແລ້ວ. ຈົ່ງເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ສາລະພາບບາບ.** ມີວິທີໃດແດ່ທີ່ຈະກຳຈັດຄວາມບາບອອກຈາກການດຳເນີນຊີວິດຂອງທ່ານ? ໃຊ້ເວລາລະຍະນຶ່ງຄິດເບິ່ງຜົນສະທ້ອນຂອງຄວາມບາບ, ແລ້ວສາລະພາບບາບເຫຼົ່ານັ້ນຕໍ່ພຣະຄຣິດ. " ຖ້າເຮົາທັງຫລາຍສາລະພາບຜິດບາບຂອງພວກເຮົາພຣະອົງຊົງສັດຊື່ແລະທ່ຽງທັມຈະຊົງໂຜດຍົກບາບຂອງພວກເຮົາແລະຈະຊົງໂຜດຊຳລະລ້າງເຮົາທັງຫລາຍຈາກການອະທັມໝົດສິ້ນ (1 ໂຢຮັນ 1:9).

- **ຂຽນຄຳອະທິຖານ.** ພວກເຮົາສ່ວນຫຼາຍອະທິຖານອອກສຽງ, ແຕ່ການຂຽນຄຳອະທິຖານເປັນການຝຶກຝົນໃນການອະທິຖານ. ຂຽນຄຳອະທິຖານກ່ຽວກັບການຂອບພຣະຄຸນພຣະເຈົ້າທີ່ພຣະອົງໄດ້ຊ່ອຍປົດປ່ອຍທ່ານໃຫ້ເປັນອິສຣະຈາກບາບຂອງທ່ານ, ຂຽນກ່ຽວກັບຄວາມເມດຕາແລະພຣະຄຸນຂອງພຣະອົງ, ຂໍໃຫ້ພຣະເຈົ້າຊ່ວຍທ່ານໃຫ້ໄດ້ສະແດງຄວາມເມດຕາຕໍ່ຄົນອື່ນເໝືອນດັ່ງທີ່ພຣະອົງໄດ້ສຳແດງພຣະຄຸນຄວາມເມດຕາຕໍ່ທ່ານ.

- **ຂຍາຍພຣະຄຸນ.** ທີ່ຜ່ານມາບໍ່ມີອາທິດໃດທີ່ບໍ່ມີສະຖານະການບາງສິ່ງບາງຢ່າງເຮັດໃຫ້ຂ້າພະເຈົ້າວຸ້ນວາຍເກີດຂຶ້ນ, ບາງຄັ້ງກໍມີຄົນຂັບຣົດຕັດໜ້າຫຼືບາງເທື່ອລູກຂອງຂ້າພະເຈົ້າຄົນນຶ່ງໃນຈຳນວນສາມຮ້ອງໃຫ້ຍາດຂອງຫຼິ້ນກັນ. ຕອນນີ້ຄວນກຽມຕົວໃຫ້ພ້ອມເພື່ອຂຍາຍພຣະຄຸນ. ຂຍາຍພຣະຄຸນໃຫ້ກັບຄົນອື່ນ. ໃນເວລາທີ່ທ່ານເບິ່ງຄືວ່າມີຄວາມວຸ້ນວາຍ. ເພື່ອສະທ້ອນໃຫ້ຄົນອື່ນເຫັນພຣະຄຣິດໃນຕົວທ່ານ.

ມັນເປັນສິ່ງທີ່ມີພະລັງແທ້ຈິງເມື່ອມີບາງຄົນສັງເກດເຫັນຄວາມຕ້ອງການໆໃຫ້ອະພັຍແລະການກັບໃຈຂອງພວກເຂົາ. ໃນຖານະທີ່ພວກເຮົາເປັນຜູ້ມີປະສົບການໆໃຫ້ອະພັຍນັ້ນ. ໃຫ້ພວກເຮົາວ່ອງໄວທີ່ຈະສນອງຄວາມຫວັງອັນນີ້ໃຫ້ກັບຄົນອື່ນ.

**ອຸປຖັມໂດຍລາວຊາວເທິນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**